**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ອຸດສາຫະກຳ ແລະ ການຄ້າ
ລັດວິສາຫະກິດໄຟຟ້າລາວ

ເລກທີ:..1674../ຟຟລ.ຫຟຟລ
ນະຄອນຫຼວງວຽງຈັນ, ວັນທີ:......29 APR 2026

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ ໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນ ປີ 2026 ເພື່ອເຊີນບັນດາ ບໍລິສັດ ທີ່ມີຄວາມສົນໃຈ ເຂົ້າຮ່ວມການປະມູນ ກ່ຽວກັບການສ້ອມແປງບຳລຸງຮັກສາພ້ອມປ່ຽນຖ່າຍອາໄຫຼ່ (Overhaul) ລະບົບແອເຢັນປະຈຳປີ 2026 ຂອງອາຄານສຳນັກງານໃຫຍ່ ແລະ ສະຖາບັນ ຟຟລ, ໄລຍະການ ບໍລິການ 1 ປີ.
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງພາຍໃນ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017. ແລະ ເອກະສານ ຄຳແນະນຳການໃຊ້ ກົດໝາຍ ສະບັບ ເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄຳແນະນຳເພີ່ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດດ້ານການບໍລິການ, ບໍລິການອື່ນໆທີ່ກ່ຽວຂ້ອງ ແລະ ໃບມອບພັນທະອາກອນປີ 2024-2025 ທີ່ຖືກຕ້ອງຕາມກົດໝາຍ.
4. ບໍລິສັດໃດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈຳນົງຊື້ເອກະສານປະມູນ ໄດ້ທີ່ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316094-1614, ທີ່ພະແນກຈັດຊື້-ຈັດຈ້າງ (ຫ້ອງການໄຟຟ້າລາວ) ຊັ້ນ 01 ຕຶກສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ ໃນໂມງລັດຖະການ , ເລີ່ມແຕ່ວັນທີ: 07/05/2026 ຫາ ວັນທີ: 15 /06/2026, ໃນລາຄາ 200.000 ກີບ/ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).
5. ຜູ້ປະມູນສາມາດລົງສຳຫຼວດສະຖານທີ່ຕົວຈິງ ກ່ອນການເປີດຊອງປະມູນ; ທີ່ຕັ້ງ ອາຄານສຳນັກງານໃຫຍ່ ແລະ ສະຖາບັນ ຟຟລ; ຜູ້ປະສານງານ: ທ້າວ ຄິດທະລາ ເບີໂທ: 020 29803003.
6. ຊອງປະມູນຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ:15/06/2026 ທີ່ຫ້ອງປະຊຸມຊັ້ນ 08, ຫ້ອງ 801, ສຳນັກງານໃຫຍ່. ຊອງປະມູນໃດສົ່ງຊ້າເກີນເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກຳມະການຈັດຊື້ ລັດວິສາຫະກິດໄຟຟ້າລາວ, ຕາງໜ້າກະຊວງການເງິນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມ.
7. ຜູ້ປະມູນຕ້ອງປະກອບໜັງສືຄ້ຳປະກັນຊອງປະມູນໃນມູນຄ່າ 2% ຂອງມູນຄ່າທີ່ສະເໜີໃນການປະມູນ ເປັນໜັງສືຄ້ຳປະກັນຈາກທະນາຄານ ຫຼື ແຊັກວີຊ່າ ທີ່ນຳໃຊ້ເຖິງ ວັນທີ:15 /09/2026.

**ຜູ້ອຳນວຍການໃຫຍ່**

ບໍລິສັດລັດ ວິສາຫະກິດໄຟຟ້າລາວ ELECTRICITE DU LAOS

**ປອ. ອາຄົມເດດ ວົງໄຊ**

**ຜູ້ອຳນວຍການໃຫຍ່**

ຖະໜົນມິດຕະພາບລາວ-ໄທ,ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ ສ ປ ປ ລາວ
ໂທ: (856-21) 316094-1614 ແຟັກ: (856-21) 316118; 263794; ອີເມລ: edlmdo@edl.com.la; ເວັບໄຊ: www.edl.com.la

ສະແກນດ້ວຍ CamScanner